# ສິດທິຂອງຂ້າພະເຈົ້າມີຫຍັງແດ່ໃນຖານະເປັນບຸກຄົນຜູ້ທີ່ໄດ້ຮັບການປິ່ນປົວສຸຂະພາບການປະພຶດທີ່ໄດ້ຮັບເງິນທຶນມາຈາກສາທາຣະນະຊົນຢູ່ໃນຊຸມນຸມຊົນ?

**ທ່ານມີສິດທີ່ຈະ:**

- ໄດ້ຮັບຣາຍຣະອຽດ ແລະ ການບໍຣິການທີ່ທ່ານຮ້ອງຂໍເອົາ, ທີ່ຖືກຄຸ້ມກັນພາຍໃຕ້ Medicaid
- ຖືກເຮັດນຳດ້ວຍຄວາມນັບຖື, ກຽດສັກສີ, ແລະ ການຮັກສາໄວ້ເປັນຄວາມລັບ
- ຊ່ວຍທຳການຕັດສິນໃຈກ່ຽວກັບການປິ່ນປົວພະຍາບານຂອງທ່ານ, ລວມທັງລວມທັງສິດທິທີ່ຈະປະຕິເສດການປິ່ນປົວ
- ເປັນອິສຣະຈາກການຜູກມັດ ຫລື ການແຍກອອກໂດດດ່ຽວ
- ໄດ້ຮັບໂກປີຂອງສິດທິຂອງຄົນເຈັບປິ່ນປົວສຸຂະພາບການປະພຶດ
- ໄດ້ຮັບໂກປີຂອງບັນທຶກພະຍາບານຂອງທ່ານ ແລະ ຮ້ອງຂໍໃຫ້ມັນຖືກປັບປຸງ ຫລື ດັດແປງໃຫມ່
- ໄດ້ຮັບຣາຍຣະອຽດທີ່ມີຢູ່ກ່ຽວກັບສະວັດດີການສຸຂະພາບການປະພຶດ
- ຍື່ນຄຳຮ້ອງທຸກ, ການອຸທອນ, ຫລື ການຟັງເຣື່ອງຈາກອຳນາດການປົກຄອງຖ້າຫາກວ່າທ່ານບໍ່ພໍໃຈ
- ໄດ້ຮັບລາຍຊື່ຂອງເລກໂທຣະສັບຍາມພາວະສຸກເສີນ
- ທຳການປ່ຽນແປງໄດ້ໃນທຸກໆເວລາໃນຜູ້ໃຫ້ການບໍຣິການຂອງທ່ານ, ຫລື ຜູ້ຈັດການເອກສານ ແລະ ໄດ້ຮັບການບໍຣິການຈາກ Ombuds ໃນການຍື່ນຄຳຮ້ອງທຸກ, ການອຸທອນ, ຫລື ການຟັງຄວາມເປັນທັມ
- ໄດ້ຮັບການບໍຣິການປິ່ນປົວຢູ່ໃນສະຖານທີ່ບໍ່ມີສິ່ງກີດກັ້ນ (ເຂົ້າເຖິງໄດ້)
- ໄດ້ຮັບລາຍຊື່, ທີ່ຢູ່, ເລກໂທຣະສັບ, ແລະ ພາສາຕ່າງໆທີ່ຖືກເອື້ອເຟື້ອໃຫ້ນອກຈາກພາສາອັງກິດຈາກຜູ້ໃຫ້ການບໍຣິການປິ່ນປົວຢູ່ໃນ BHO ຂອງທ່ານທຸກໆປີ ຫລື ເມື່ອເວລາທ່ານຮ້ອງຂໍເອົາ
- ໄດ້ຮັບຈຳນວນ ແລະ ຣະຍະເວລາຂອງການບໍຣິການປິ່ນປົວທີ່ທ່ານຕ້ອງການ
- ໄດ້ຮັບໃບຫນັງສືແຈ້ງການກະທຳຈາກ BHO ຖ້າຫາກວ່າການບໍຣິການປິ່ນປົວໄດ້ຖືກປະຕິເສດ, ຈຳກັດ, ລຸດລົງ, ໂຈະລໍຖ້າ, ຫລື ຕັດ ຫລື ວ່າທ່ານບໍ່ເຫັນພ້ອມນຳແຜນການ
- ໄດ້ຮັບຣາຍຣະອຽດກ່ຽວກັບໂຄງຮ່າງ ແລະ ການປະຕິບັດງານຂອງ BHO
- ໄດ້ຮັບການປິ່ນປົວສຸກເສີນ ຫລື ຮີບດ່ວນ ຫລື ການປິ່ນປົວຍາມພາວະສຸກເສີນ
- ໄດ້ຮັບການປິ່ນປົວເຮັດໃຫ້ຫຸ່ມທ່ຽງໃນເວລາຕໍ່ມາຫລັງຈາກທີ່ທ່ານໄດ້ຮັບການປິ່ນປົວສຸກເສີນ ຫລື ຮີບດ່ວນ ຫລື ການປິ່ນປົວຍາມພາວະສຸກເສີນຊຶ່ງເປັນຜົນອອກມາຈາກການເຂົ້ານອນໂຮງພະຍາບານ
- ໄດ້ຮັບການບໍຣິການປິ່ນປົວເຫມາະສົມຕາມອາຍຸ ແລະ ປະເພນີວັດທະນະທັມ
- ໄດ້ນາຍແປພາສາທີ່ຖືກຢັ້ງຢືນ ແລະ ເອກສານທີ່ຖືກແປພາສາແລ້ວໂດຍບໍ່ຄິດຄ່າຕໍ່ທ່ານ
- ໄດ້ຮັບຣາຍຣະອຽດທີ່ທ່ານຮ້ອງຂໍເອົາ ແລະ ຄວາມຊ່ວຍເຫລືອໃນພາສາ ຫລື ຮູບແບບຕາມໃຈຊອບຂອງທ່ານ
- ມີທາງເລືອກຂອງການປິ່ນປົວໄວ້ໃຫ້ ແລະ ທາງອອກອື່ນໆຖືກອະທິບາຍສູ່ທ່ານຟັງ
- ປະຕິເສດການປິ່ນປົວທີ່ຖືກສະເນີໃຫ້
- ໄດ້ຮັບການປິ່ນປົວທີ່ບໍ່ແບ່ງແຍກຊົນຊັ້ນວັນນະໃສ່ທ່ານ (ເຊັ່ນວ່າອາຍຸ, ຜິວພັນ, ຊະນິດຂອງການເຈັບປ່ວຍ)
- ເປັນອິດສະຣະຈາກການສວຍໂອກາດທາງເພດ ຫລື ການຮົບກວນຕ່າງໆ
- ໄດ້ຮັບການອະທິບາຍກ່ຽວກັບຢາທຸກໆຢ່າງທີ່ຖືກສັ່ງໃຫ້ ແລະ ຜົນສະທ້ອນທີ່ອາດຈະເປັນໄປໄດ້
- ເຮັດໃບຊີ້ນຳແນວທາງລ່ວງຫນ້າສຸຂະພາບໂຣກຈິດຊຶ່ງຈະບອກທາງເລືອກ ແລະ ຄວາມຊອບໃຈຂອງທ່ານສຳລັບການປິ່ນປົວສຸຂະພາບໂຣກຈິດ
- ໄດ້ຮັບຣາຍຣະອຽດກ່ຽວກັບຄຳຊີ້ນຳແນວທາງລ່ວງຫນ້າດ້ານການພະຍາບານ
- ໄດ້ຮັບການບໍຣິການປິ່ນປົວທີ່ມີຄຸນນະພາບຊຶ່ງຈຳເປັນທາງດ້ານການພະຍາບານ
- ໄດ້ຮັບຄວາມເຫັນທັສນະທີສອງຈາກຜູ້ຊ່ຽວຊານສຸຂະພາບການປະພຶດຢູ່ໃນເຂດ BHO ຂອງທ່ານຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຜູ້ໃຫ້ການບໍຣິການຂອງທ່ານ
- ເລືອກຜູ້ໃຫ້ການບໍຣິການປິ່ນປົວສຳລັບຕົວທ່ານເອງ ແລະ ລູກຂອງທ່ານ (ຖ້າຫາກວ່າລູກຂອງທ່ານມີອາຍຸຕ່ຳກວ່າ 13 ປີ)
- ຮ້ອງຂໍ ແລະ ຮັບເອົາໃບໂກປີຂອງບັນທຶກສຸຂະພາບຂອງທ່ານ. ທ່ານຈະຖືກແຈ້ງບອກເຖິງຄ່າຂອງການເຮັດໂກປີ

Washington State
Department of Social & Health Services
*Transforming lives*

ທ່ານຍັງຈະຕິດຕໍ່ຫາ **Office of Civil Rights** ໄດ້ເພື່ອຣາຍຣະອຽດເພີ້ມເຕີມທີ່ www.hhs.gov/ocr ຫລື ແວ່ເຂົ້າຢ້ຽມ http://apps.leg.wa.gov/wac/default.aspx?dispo=true&cite=388-877-0680

DSHS 22-1165 LA (Rev. 10/16)